ໂຄງການສ້າງຄວາມເຂັ້ມແຂງໃຫ້ແກ່ຕ່ອງໂສ້ມູນຄ່າອາຫານ
ໃນ ສປປ ລາວ

# ບົດແນະນຳ

## ການຮ່ວມມືພາກລັດ, ເອກະຊົນ ແລະ ຊຸມຊົນ (PPCP)






**ສະໜັບສະໜູນ ໂດຍ:**
ອົງການຮ່ວມມືສາກົນ ປະເທດ ຍີ່ປຸ່ນ (JICA)

# ຄຳນຳ

ປຶ້ມແນະນຳນີ້ອະທິບາຍເຖິງໜຶ່ງໃນກິດຈະກຳທີ່ສຳຄັນກ່ຽວກັບການສ້າງຄວາມເຂັ້ມແຂງລະບົບຕ່ອງໂສ້ມູນຄ່າອາຫານ, "ການຮ່ວມມືພາກລັດ, ເອກະຊົນ ແລະ ຊຸມຊົນ" ຫຼື PPCP. ການຮ່ວມມື PPCP ໃນ ສປປ ລາວ ມີຈຸດປະສົງເພື່ອສ້າງຄວາມເຂັ້ມແຂງລະບົບຕ່ອງໂສ້ມູນຄ່າສະບຽງອາຫານ ໂດຍການອຳນວຍຄວາມສະດວກໃນການຮ່ວມມືລະຫວ່າງສະຖາບັນພາກລັດ, ຜູ້ປະກອບການພາກເອກະຊົນ ແລະ ຊຸມຊົນຊາວກະສິກອນ. ໂດຍຜ່ານກິດຈະກຳຕ່າງໆເຊັ່ນ: ການສ້າງເຄືອຂ່າຍ, ການແລກປ່ຽນຂໍ້ມູນຂ່າວສານ, ແລະການພົວພັນດ້ານວິຊາການ, PPCP ສົ່ງເສີມການແລກປ່ຽນຄວາມຮູ້ ແລະ ຄວາມເຂົ້າໃຈເຊິ່ງກັນແລະ ກັນລະຫວ່າງຜູ້ມີສ່ວນຮ່ວມ. ການຮ່ວມມືນີ້ນຳໄປສູ່ຜົນປະໂຫຍດຕ່າງໆ ລວມທັງການເພີ່ມທະວີການເຂົ້າເຖິງຂໍ້ມູນຂ່າວສານ, ໂອກາດໃນການສ້າງເຄືອຂ່າຍ, ແລະການຝຶກອົບຮົມວິຊາການໃຫ້ແກ່ເຈົ້າໜ້າທີ່ພາກລັດ, ພາກເອກະຊົນ, ແລະ ຊາວກະສິກອນ. ໂດຍລວມແລ້ວ, PPCP ມີບົດບາດສຳຄັນໃນການຊຸກຍູ້ການພັດທະນາກະສິກຳທີ່ມີປະສິດທິພາບ ຜ່ານຄວາມປະສົງໃນການຮ່ວມມືຂອງບັນດາພາກສ່ວນກ່ຽວຂ້ອງທີ່ມີຄວາມຫຼາກຫຼາຍ.

ປຶ້ມແນະນຳສະບັບນີ້ ໄດ້ຮັບການສ້າງຂຶ້ນມາຈາກການຮ່ວມມືຂອງ ກົມສົ່ງເສີມກະສິກຳ ແລະ ສະຫະກອນ ແລະ ຮ່ວມກັບໂຄງການສ້າງຄວາມເຂັ້ມແຂງໃຫ້ແກ່ຕ່ອງໂສ້ມູນຄ່າອາຫານໃນສປປລາວ (FVC). ຄູ່ມືສະບັບນີ້ໄດ້ມີການຄັດຈ້ອນ, ສັງລວມຈາກບັນດາ ເອກະສານດ້ານວິຊາການ ແລະ ປະສົບການຕົວຈິງໃນພາກປະຕິບັດຂອງຫຼາຍພາກສ່ວນ ໂດຍມີການເຂົ້າຮ່ວມປະກອບຄຳຄິດຄຳເຫັນຈາກຕົວແທນຂອງພະນັກງານ, ຜູ້ປະກອບການພາກເອກະຊົນ ແລະ ກຸ່ມຕົວແທນຊາວກະສິກອນລາວ.

ດັ່ງນັ້ນ, ຖ້າການສະໜອງຂໍ້ມູນບາງອັນຍັງບໍ່ພຽງພໍ ທາງທີມງານຜູ້ຈັດພິມກໍ່ຍິນດີຮັບຟັງທຸກໆຄຳແນະນຳຈາກບັນດາທ່ານ ເພື່ອປັບປຸງຄູ່ມືດັ່ງກ່າວໃຫ້ດີຂຶ້ນໄປເລື້ອຍໆ. ທີມງານຜູ້ຈັດພິມຂໍສະແດງຄວາມຂອບໃຈ ແລະ ຮູ້ບຸນຄຸນມາຍັງທຸກໆອົງການຈັດຕັ້ງ ແລະບຸກຄົນທີ່ໄດ້ປະກອບສ່ວນໃນການພັດທະນາປຶ້ມນີ້ດ້ວຍ.

# ສາລະບານ

ໜ້າ


**ຄຳນຳ……………………………………………………………………………………………ii**
**ສາລະບານ…………………………………………………………………………………………iii**
1. ຈຸດປະສົງ…………………………………………………………………………………………1
1.1. ແນວຄວາມຄິດຂອງການຮ່ວມມືພາກລັດ, ເອກະຊົນ ແລະ ຊຸມຊົນ ……………………………1
1.2. ຈຸດປະສົງຂອງການຮ່ວມມືພາກລັດ, ເອກະຊົນ ແລະ ຊຸມຊົນ …………………………………1
1.3. ຜູ້ມີສ່ວນຮ່ວມຫຼັກຂອງການຮ່ວມມືພາກລັດ, ເອກະຊົນ ແລະ ຊຸມຊົນ…………………………2
2. ກິດຈະກຳ…………………………………………………………………………………………2
2.1. ການສ້າງຕັ້ງການຮ່ວມມືພາກລັດ, ເອກະຊົນ ແລະ ຊຸມຊົນ……………………………………2
2.2. ກິດຈະກຳຂອງການຮ່ວມມືພາກລັດ, ເອກະຊົນ ແລະ ຊຸມຊົນ …………………………………3
3. ຜົນໄດ້ຮັບ…………………………………………………………………………………………4
4. ບົດຮຽນທີ່ຖອດຖອນໄດ້…………………………………………………………………………5
4.1. ຈຸດສຳຄັນເພື່ອໃຫ້ໄດ້ຮັບຜົນປະໂຫຍດຂອງ PPCP……………………………………………5
4.2. ທິດທາງໃນຕໍ່ໜ້າ…………………………………………………………………………………6
**ເອກະສານອ້າງອີງ:…………………………………………………………………………………6**

# 1. ຈຸດປະສົງ

## 1.1. ແນວຄວາມຄິດຂອງການຮ່ວມມືພາກລັດ, ເອກະຊົນ ແລະ ຊຸມຊົນ

ການຮ່ວມມືພາກລັດ, ເອກະຊົນ ແລະ ຊຸມຊົນ (PPCP) ແມ່ນເວທີເພື່ອຊຸກຍູ້ການພົວພັນລະຫວ່າງສະຖາບັນພາກລັດ ລວມທັງອົງການຈັດຕັ້ງທາງວິຊາການ, ພາກເອກະຊົນ ແລະ ຊຸມຊົນຊາວກະສິກອນ. PPCP ນໍາໄປສູ່ການສ້າງສະພາບແວດລ້ອມທີ່ເອື້ອອໍານວຍສໍາລັບລະບົບຕ່ອງໂສ້ມູນຄ່າອາຫານ (FVC) ເພື່ອເພີ່ມຜົນປະໂຫຍດລວມຂອງຂະບວນການຕ່ອງໂສ້ມູນຄ່າ.

## 1.2. ຈຸດປະສົງຂອງການຮ່ວມມືພາກລັດ, ເອກະຊົນ ແລະ ຊຸມຊົນ

PPCP ເຮັດໜ້າທີ່ເປັນເວທີປະສານງານລະຫວ່າງພາກລັດ, ເອກະຊົນ ແລະ ຊຸມຊົນ. ຜ່ານການຮ່ວມມືລະຫວ່າງພາກສ່ວນດັ່ງກ່າວ, ຜູ້ມີສ່ວນຮ່ວມໃນ PPCP ສາມາດໄດ້ຮັບຜົນປະໂຫຍດຕ່າງໆ. ຜ່ານການປະສານງານລະຫວ່າງພາກລັດ ແລະ ພາກເອກະຊົນ, ຜູ້ມີສ່ວນຮ່ວມສາມາດເພີ່ມໂອກາດໃນການແລກປ່ຽນຂໍ້ມູນຂ່າວສານ. ພ້ອມກັນນັ້ນ, ການປະສານງານລະຫວ່າງພາກລັດ ແລະ ຊຸມຊົນສາມາດເຮັດໃຫ້ການສົ່ງເສີມເຕັກນິກມີຄວາມຄືກຄົ້ນຫຼາຍຂຶ້ນ, ແລະ ເສີມສ້າງຄວາມເຂົ້າໃຈເຊິ່ງກັນແລະກັນໃນພາກການຄົ້ນຄວ້າ ແລະ ພາກປະຕິບັດ. ທ້າຍທີ່ສຸດ, ການຮ່ວມມື PPCP ອາດຈະນໍາໄປສູ່ການພັດທະນາກະສິກໍາຢ່າງມີປະສິດທິພາບຂອງ ສປປ ລາວ.




ຮູບ 1.1 ຕົວແບບຂອງການຮ່ວມມື PPCP ເພື່ອສ້າງຄວາມເຂັ້ມແຂງ FVC

PPCP ຍັງມີເປົ້າໝາຍໃນການກະຕຸ້ນການພົວພັນລະຫວ່າງຜູ້ມີສ່ວນຮ່ວມໃນຂັ້ນຕອນຂອງ FVC ຈາກການຜະລິດ, ການປຸງແຕ່ງ, ການຈໍລະຈອນແຈກຢາຍ ໄປຈົນຮອດການຈໍາໜ່າຍ. PPCP ຊ່ວຍໃຫ້ການແລກປ່ຽນຂໍ້ມູນລະຫວ່າງຜູ້ມີສ່ວນຮ່ວມເປັນໄປຢ່າງຄືກຄົ້ນ ເພື່ອໃຫ້ເກີດມີຄວາມໂປ່ງໃສໃນຂະບວນການຂອງຕ່ອງໂສ້ມູນຄ່າ




ຮູບ 1.2 ການພົວພັນລະຫວ່າງແຕ່ລະຂັ້ນຕອນຂອງ FVC

### 1.3. ຜູ້ມີສ່ວນຮ່ວມຫຼັກຂອງການຮ່ວມມືພາກລັດ, ເອກະຊົນ ແລະ ຊຸມຊົນ

PPCP ປະກອບດ້ວຍຜູ້ມີສ່ວນຮ່ວມຈາກຫຼາຍພາກສ່ວນ. ຜູ້ມີສ່ວນຮ່ວມຫຼັກທີ່ສຳຄັນຂອງ PPCP ແມ່ນໄດ້ລະບຸໄວ້ຢູ່ໃນຕາຕະລາງຂ້າງລຸ່ມນີ້. ໃນການຮ່ວມມືດັ່ງກ່າວ, ກົມສົ່ງເສີມກະສິກຳ ແລະ ສະຫະກອນ (DAEC), ກະຊວງກະສິກຳ ແລະ ປ່າໄມ້ (MAF) ມີບົດບາດເປັນຜູ້ປະສານງານ.

ຕາຕະລາງ 1.1 ຜູ້ມີສ່ວນຮ່ວມຫຼັກຂອງການຮ່ວມມືພາກລັດ, ເອກະຊົນ ແລະ ຊຸມຊົນ

| | ຜູ້ມີສ່ວນຮ່ວມຫຼັກ |
|---|---|
| **ພາກລັດ** | - ກະຊວງກະສິກຳ ແລະ ປ່າໄມ້ (MAF)<br>- ກະຊວງອື່ນໆທີ່ກ່ຽວຂ້ອງ (ກະຊວງອຸດສາຫະກຳ ແລະ ການຄ້າ; MOIC, ກະຊວງສາທາລະນະສຸກ; MOH, ໆລໆ)<br>- ພະແນກ/ຫ້ອງການກະສິກຳ ແລະ ປ່າໄມ້; PAFO/DAFO<br>- ມະຫາວິທະຍາໄລ/ວິທະຍາໄລເຕັກນິກ<br>- ສູນຄົ້ນຄ້ວາ |
| **ພາກເອກະຊົນ** | - ຜູ້ຄ້າຂາຍ/ຄົນກາງ/ຜູ້ເກັບຊື້/ຜູ້ຄ້າສົ່ງ<br>- ຮ້ານຄ້າຍ່ອຍ/ຫ້າງສັບພະສິນຄ້າ<br>- ຮ້ານຂາຍປັດໄຈນຳເຂົ້າ ແລະ ກົນຈັກກະສິກຳ<br>- ທະນາຄານ<br>- ບໍລິສັດບໍລິການດ້ານສະບຽງອາຫານ ແລະ ກະສິກຳ, ໆລໆ |
| **ຊຸມຊົນ** | - ຊາວກະສິກອນ<br>- ກຸ່ມ ແລະ ສະຫະກອນກະສິກຳ |

## 2. ກິດຈະກຳ

### 2.1. ການສ້າງຕັ້ງການຮ່ວມມືພາກລັດ, ເອກະຊົນ ແລະ ຊຸມຊົນ

PPCP, ທີ່ຖືກສ້າງຂຶ້ນໃນໂຄງການ FVC ປະກອບດ້ວຍ 2 ຂັ້ນຂອງຄູ່ຮ່ວມງານ; ຂັ້ນເວທີ PPCP ລວມ ແລະ ຂັ້ນຄູ່ຮ່ວມງານຍ່ອຍຂັ້ນແຂວງ (ຫຼື ສຳລັບແຕ່ລະສິນຄ້າ). ເວທີ PPCP ລວມ ຫມາຍເຖິງການຮ່ວມມື, ຫຼື ການປະສານງານລະຫວ່າງບັນດາພາກສ່ວນກ່ຽວຂ້ອງຈາກພາກລັດ, ເອກະຊົນ ແລະ ຊຸມຊົນ. ໃນທາງກົງກັນຂ້າມ, ຄູ່ຮ່ວມງານຍ່ອຍຂັ້ນແຂວງ (ຫຼື ສຳລັບແຕ່ລະສິນຄ້າ) ໝາຍເຖິງກຸ່ມທີ່ສ້າງຂຶ້ນຕາມແຂວງ (ຫຼື ຕາມປະເພດສິນຄ້າ ເຊັ່ນ: ຜັກ, ໝາກ ໄມ້, ສັດລ້ຽງ, ໆລໆ).

ກິດຈະກຳ PPCP ຂ້າງລຸ່ມນີ້, ຈະຖືກຈັດຂຶ້ນໃນເວທີລວມ ຫຼື ກຸ່ມຍ່ອຍ ແມ່ນຂຶ້ນກັບຈຸດປະສົງ ແລະ ຫົວຂໍ້. ຕົວຢ່າງ, ການສຳມະນາ, ກິດຈະກຳການຈັບຄູ່ທຸລະກິດ, ຫຼື ກິດຈະກຳທີ່ມີຫົວຂໍ້ກວ້າງຂວາງກວມລວມ ຈະຖືກປະກາດແຈ້ງການ ແລະ ຈັດຂຶ້ນໃນເວທີລວມ. ໃນທາງກົງກັນຂ້າມ, ການຝຶກອົບຮົມດ້ານວິຊາການ, ການສຳມະນາຂັ້ນທ້ອງຖິ່ນ, ຫຼື ກິດຈະກຳສະເພາະສິນຄ້າໃດໜຶ່ງ ຈະໄດ້ຮັບການຈັດໃນກຸ່ມຄູ່ຮ່ວມງານຍ່ອຍ. ດັ່ງນັ້ນ, PPCP ສາມາດສ້າງສະພາບແວດລ້ອມເອື້ອອຳນວຍໃຫ້ມີທັງການສື່ສານແບບເປີດ ແລະ ການພົວພັນແບບມືອາຊີບ




ຮູບ 2.1 ໂຄງຮ່າງການຈັດຕັ້ງຂອງເວທີ PPCP

## 2.2. ກິດຈະກຳຂອງການຮ່ວມມືພາກລັດ, ເອກະຊົນ ແລະ ຊຸມຊົນ

ມີຫຼາຍວິທີການປະສານງານລະຫວ່າງພາກລັດ, ເອກະຊົນ ແລະ ຊຸມຊົນ ທີ່ສາມາດນຳມາພິຈາລະນາໄດ້. ບົດນີ້ສະແດງໃຫ້ເຫັນບາງຕົວຢ່າງຂອງການປະສານງານ.

### 2.2.1. ການສ້າງເຄືອຂ່າຍ ແລະ ແລກປ່ຽນຂໍ້ມູນຂ່າວສານ

ກ່ອນອື່ນໝົດ, ການສ້າງເຄືອຂ່າຍແມ່ນໜຶ່ງໃນໜ້າທີ່ພື້ນຖານຂອງ PPCP ເພື່ອຊຸກຍູ້ການຮ່ວມມືລະຫວ່າງພາກລັດ,ເອກະຊົນ ແລະ ຊຸມຊົນ. ຫຼືເວົ້າອີກຢ່າງໜຶ່ງ, ໂດຍຜ່ານເວທີ PPCP, ຜູ້ເຂົ້າຮ່ວມຈະສາມາດຂະຫຍາຍເຄືອຂ່າຍທາງສັງຄົມຂອງຕົນ ແລະ ຊອກຫາໂອກາດທີ່ຈະສ້າງຄວາມເຂັ້ມແຂງໃຫ້ວຽກງານ ແລະ ທຸລະກິດຂອງຕົນ.

ຫຼັງຈາກນັ້ນ, PPCP ຊຸກຍູ້ໃຫ້ມີການແລກປ່ຽນຂໍ້ມູນຂ່າວສານລະຫວ່າງພາກສ່ວນກ່ຽວຂ້ອງ. ຫມາຍຄວາມວ່າ PPCP ສ້າງໂອກາດໃຫ້ຜູ້ມີສ່ວນຮ່ວມ ໃນການແລກປ່ຽນຂໍ້ມູນຜ່ານການສື່ສານອອນໄລນ໌ ແລະ ແບບເຊິ່ງໜ້າ.

ຕົວຢ່າງ,



ຮູບ 2.2 ການສ້າງເຄືອຂ່າຍ ແລະ ແລກປ່ຽນຂໍ້ມູນຂ່າວສານລະຫວ່າງຜູ້ມີສ່ວນຮ່ວມໃນ PPCP

ການບໍລິການເຄືອຂ່າຍສັງຄົມອອນໄລນ໌ (ເຊັ່ນ: WhatsApp, ເຟສບຸກ, ກຸ່ມອີເມລ໌) ແມ່ນຫນຶ່ງໃນເຄື່ອງມືທີ່ມີປະສິດທິພາບເຮັດໃຫ້ການປະສານງານລະຫວ່າງສະມາຊິກ PPCP ດີຂຶ້ນ. ກຸ່ມເຄືອຂ່າຍສັງຄົມ ສາມາດຖືກນຳໃຊ້ເພື່ອຊຸກຍູ້ການແລກປ່ຽນຂໍ້ມູນຂ່າວສານ ແລະ ການພົວພັນດ້ານວິຊາການ, ປຶກສາຫາລືບັນຫາຂອງແຕ່ລະພາກສ່ວນກ່ຽວຂ້ອງ, ແຈ້ງການກ່ຽວກັບກິດຈະກຳຂອງ PPCP ໆລໆ. ເຄືອຂ່າຍສັງຄົມອອນໄລນ໌ເຮັດໃຫ້ການພົວພັນ ແລະ ການແລກປ່ຽນຂໍ້ມູນຂ່າວສານລະຫວ່າງສະມາຊິກ PPCP ເປັນໄປໄດ້ງ່າຍ ແລະ ມີປະສິດທິພາບ.

2.2.2.  ການພົວພັນ ແລະ ຝຶກອົບຮົມດ້ານວິຊາການ

ໜຶ່ງໃນກິດຈະກໍາທີ່ສໍາຄັນຂອງ PPCP ແມ່ນການພົວພັນດ້ານວິຊາການ, ຊຶ່ງໝາຍເຖິງ ການຝຶກອົບຮົມ, ການສົນທະນາ ຫຼື ການປຶກສາຫາລືດ້ານວິຊາການ ລະຫວ່າງບັນດາສະມາຊິກ PPCP.

ຈຸດປະສົງຂອງການຝຶກອົບຮົມດ້ານວິຊາການອາດແມ່ນເພື່ອ 1) ໃຫ້ເຕັກໂນໂລຢີໃນສາຂາວິຊາການ ຫຼື ສາຂາການຄົ້ນຄວ້າ ສາມາດນໍາໄປປະຕິບັດຕົວຈິງໄດ້, 2) ໃຫ້ຊາວກະສິກອນສາມາດປຶກສາບັນຫາຂອງເຂົາເຈົ້າກັບຜູ້ຊ່ຽວຊານ, 3) ໃຫ້ນັກຄົ້ນຄວ້າ ແລະ ພະນັກງານລັດສາມາດຮັບຮູ້ສະຖານະການ ແລະ ບັນຫາໃນປະຈຸບັນຂອງພາກສະໜາມ ແລະ ອື່ນໆ.




ຮູບ 2.3  ການຝຶກອົບຮົມ ແລະ ປຶກສາຫາລືດ້ານວິຊາການ ລະຫວ່າງບັນດາສະມາຊິກ PPCP

## 3.  ຜົນໄດ້ຮັບ

ໂດຍຜ່ານກິດຈະກໍາ PPCP, ແຕ່ລະຂະແໜງການ ແລະ ພາກສ່ວນກ່ຽວຂ້ອງສາມາດໄດ້ຮັບຜົນປະໂຫຍດຕ່າງໆ. ຜົນປະໂຫຍດທີ່ອາດຈະໄດ້ຮັບໃນແຕ່ລະຂະແໜງການແມ່ນໄດ້ສະຫຼຸບໃນຕາຕະລາງຕໍ່ໄປນີ້.

ທ້າຍທີ່ສຸດ, ການຮ່ວມມືລະຫວ່າງພາກລັດ, ເອກະຊົນ ແລະ ຊຸມຊົນ ຈະສາມາດນໍາໄປສູ່ການພັດທະນາກະສິກໍາຂອງ ສປປ ລາວ ຢ່າງມີປະສິດທິຜົນ.

ຕາຕະລາງ 3.1 ຜົນປະໂຫຍດທີ່ຜູ້ມີສ່ວນຮ່ວມ PPCP ຈະໄດ້ຮັບ

| | ຜູ້ມີສ່ວນຮ່ວມ | ຜົນປະໂຫຍດ |
|---|---|---|
| ພາກລັດ | - ກົມສົ່ງເສີມກະສິກຳ ແລະ ສະຫະກອນ (DAEC)<br>- ກົມອື່ນໆພາຍໃຕ້ກະຊວງກະສິກຳ ແລະ ປ່າໄມ້<br>- ກະຊວງອື່ນໆທີ່ກ່ຽວຂ້ອງ<br>- ພະແນກ/ຫ້ອງການກະສິກຳ ແລະ ປ່າໄມ້<br>- ມະຫາວິທະຍາໄລ/ວິທະຍາໄລເຕັກນິກ (ມະຫາວິທະຍາໄລແຫ່ງຊາດ; ມະຫາວິທະຍາໄລເຕັກນິກກະສິກຳຈຳປາສັກ ແລະ ອື່ນໆ)<br>- ສູນຄົ້ນຄວ້າ (ສະຖາບັນຄົ້ນຄວ້າກະສິກຳ ແລະ ປ່າໄມ້ແຫ່ງຊາດ; NAFRI, ແລະອື່ນໆ) | - ພະນັກງານລັດສາມາດມີໂອກາດເຂົ້າເຖິງຂໍ້ມູນຂ່າວສານ ແລະ ຮູ້ຄວາມຕ້ອງການຂອງຂະແໜງການອື່ນເພື່ອນຳໄປພິຈາລະນານະໂຍບາຍ, ແຜນການ, ກົດໝາຍ, ລະບຽບການ ແລະ ອື່ນໆ.<br>- ກິດຈະກຳ PPCP ສາມາດເປັນໜຶ່ງໃນຜົນສຳເລັດຂອງກິດຈະກຳສົ່ງເສີມຂອງພະນັກງານລັດ, ໂດຍສະເພາະພະນັກງານສົ່ງເສີມ.<br>- ພະນັກງານລັດ ຫຼື ນັກຄົ້ນຄວ້າສາມາດໄດ້ຮັບຄວາມຮູ້ກ່ຽວກັບການດຳເນີນທຸລະກິດຈາກພາກສ່ວນກ່ຽວຂ້ອງຂອງ FVC. |
| ພາກເອກະຊົນ | - ຄົນກາງ/ຜູ້ເກັບຊື້/ຜູ້ຄ້າສົ່ງ<br>- ຮ້ານຄ້າຍ່ອຍ<br>- ຮ້ານຂາຍປັດໄຈນຳເຂົ້າ ແລະ ກົນຈັກກະສິກຳ<br>- ທະນາຄານ<br>- ບໍລິສັດເອກະຊົນ | - ຜູ້ມີສ່ວນຮ່ວມສາມາດພົວພັນ ແລະ ສ້າງເຄືອຂ່າຍກັບຜູ້ປະກອບການຕ່າງໆໃນ FVC<br>- ມີສ່ວນຮ່ວມສາມາດໄດ້ຮັບໂອກາດທາງທຸລະກິດເພື່ອຮ່ວມມືກັບພາກສ່ວນກ່ຽວຂ້ອງອື່ນໆ. |
| ຊຸມຊົນ | - ຊາວກະສິກອນ<br>- ກຸ່ມ/ສະຫະກອນກະສິກຳ | - ຊາວກະສິກອນສາມາດໄດ້ຮັບການຝຶກອົບຮົມດ້ານວິຊາການຈາກຜູ້ຊ່ຽວຊານໃນພາກລັດ ຫຼື ສະຖາບັນວິຊາການ.<br>- ພາກສ່ວນກ່ຽວຂ້ອງ, ໂດຍສະເພາະຊາວກະສິກອນສາມາດປຶກສາບັນຫາຂອງຕົນກັບຜູ້ຊ່ຽວຊານ.<br>- ຊາວກະສິກອນສາມາດຂະຫຍາຍເຄືອຂ່າຍທຸລະກິດເພື່ອເພີ່ມໂອກາດການຂາຍ. |

# 4. ບົດຮຽນທີ່ຖອດຖອນໄດ້

## 4.1. ຈຸດສຳຄັນເພື່ອໃຫ້ໄດ້ຮັບຜົນປະໂຫຍດຂອງ PPCP

ຈຸດສຳຄັນເພື່ອໃຫ້ໄດ້ຮັບຜົນປະໂຫຍດຂອງ PPCP ທີ່ໄດ້ກ່າວມາຂ້າງເທິງ ມີດັ່ງລຸ່ມນີ້:

4.1.1. ການອຳນວຍຄວາມສະດວກ ແລະ ການຈັບຄູ່ທີ່ເໝາະສົມເພື່ອໃຫ້ໄດ້ຮັບຜົນປະໂຫຍດຂອງ PPCP

ຜູ້ມີສ່ວນຮ່ວມຈະບໍ່ສາມາດພົວພັນກັບຜູ້ກ່ຽວຂ້ອງອື່ນໆ ຖ້າບໍ່ມີການອຳນວຍຄວາມສະດວກ. ດັ່ງນັ້ນ, ອົງການຈັດຕັ້ງເພື່ອອຳນວຍຄວາມສະດວກໃນການຮ່ວມມື ຫຼື ຜູ້ອຳນວຍຄວາມສະດວກ, ແມ່ນມີຄວາມສຳຄັນຫຼາຍທີ່ຈະສ້າງຜົນປະໂຫຍດໃຫ້ແກ່ພາກສ່ວນກ່ຽວຂ້ອງ. ໂດຍການຮ່ວມມືຂອງຜູ້ອຳນວຍຄວາມສະດວກ, ການຈັບຄູ່ທີ່ເໝາະສົມອາດຈະເປັນໄປໄດ້.

4.1.2. ກົນໄກການສະສົມ ແລະ ເຜີຍແຜ່ຄວາມຮູ້ ເພື່ອເສີມຂະຫຍາຍຜົນປະໂຫຍດຂອງ PPCP

ຈຸດທີສອງເພື່ອເພີ່ມຜົນປະໂຫຍດຂອງ PPCP ແມ່ນກົນໄກທີ່ມີປະສິດທິພາບໃນການສະສົມ ແລະ ເຜີຍແຜ່ຄວາມຮູ້ ແລະ ທັກສະລະຫວ່າງບັນດາພາກສ່ວນກ່ຽວຂ້ອງ. ສະນັ້ນ, ການບໍລິການໂຊຊ້ຽວ ຈະມີປະສິດທິພາບໃນການເຜີຍແຜ່ຄວາມຮູ້ ແລະ ຂໍ້ປະຕິບັດຕ່າງໆ.

## 4.2. ທິດທາງໃນຕໍ່ໜ້າ

ບົດບາດໜ້າທີ່ຂອງ PPCP ຍັງສາມາດຂະຫຍາຍໄດ້ເພີ່ມອີກບາງຈຸດ.

### 4.2.1. ການຂະຫຍາຍບົດບາດໜ້າທີ່

ເວທີ PPCP ຍັງມີທ່າແຮງທີ່ຈະຂະຫຍາຍບົດບາດຫນ້າທີ່ເປັນ: ການໃຫ້ຄໍາປຶກສາດ້ານວິຊາການ, ການຄົ້ນຄວ້າ ແລະ ການພັດທະນາຮ່ວມກັນ, ການຮ່ວມມືທຸລະກິດ, ໂຄງການເງິນອຸດຫນູນ, ການອອກໃບອະນຸຍາດ, ການໃຊ້ອຸປະກອນ ແລະ ສິ່ງອໍານວຍຄວາມສະດວກຮ່ວມກັນ, ແລະ ອື່ນໆ.

### 4.2.2. ການຂະຫຍາຍຂົງເຂດທຸລະກິດ ແລະ ເຕັກນິກວິຊາການ

PPCP ສາມາດກວມເອົາຂົງເຂດທຸລະກິດ ແລະ ເຕັກໂນໂລຊີທີ່ກວ້າງຂວາງຂຶ້ນ, ເຊັ່ນ: ການເພີ່ມລາຍການສິນຄ້າ ຫຼື ແຂວງເປົ້າໝາຍ, ການມີສ່ວນຮ່ວມຂອງພາກເອກະຊົນປະເພດຕ່າງໆ ແລະ ອື່ນໆ.

### 4.2.3. ການຮ່ວມມືກັບເຄືອຂ່າຍອື່ນໆທີ່ມີຢູ່

PPCP ຍັງສາມາດຮ່ວມມືກັບເຄືອຂ່າຍອື່ນໆທີ່ມີຢູ່ໃນ ສປປ ລາວ ເຊັ່ນ: ເຄືອຂ່າຍຊາວກະສິກອນ, ເຄືອຂ່າຍພໍ່ຄ້າ, ເຄືອຂ່າຍຜູ້ໃຫ້ທຶນ ແລະ ອື່ນໆ.

ແນວໃດກໍ່ຕາມ, PPCP ຈະສືບຕໍ່ມີບົດບາດສໍາຄັນໃນການເສີມສ້າງລະບົບຕ່ອງໂສ້ມູນຄ່າອາຫານ.

# ເອກະສານອ້າງອີງ:


- IFAD (2013) “IFAD and public-private partnerships: Selected project experiences”
- ACIAR (2018) “Lao Agriculture Research Fund (LARF-3)”
- CRDS (2016) “Overview of Science and Technology in Lao PDR (in Japanese)”
- Ministry of Industry and Commerce, Japan (2008) “Start Points of Public, Private and Academia Partnership (in Japanese)”



**ພັດທະນາໂດຍ:**

ກົມສົ່ງເສີມກະສິກໍາ ແລະ ສະຫະກອນ, ກະຊວງກະສິກໍາ ແລະ ປ່າໄມ້

ໂຄງການ ສ້າງຄວາມເຂັ້ມແຂງໃຫ້ແກ່ຕ່ອງໂສ້ມູນຄ່າອາຫານ ຢູ່ ສປປ ລາວ

ນະຄອນຫຼວງວຽງຈັນ, ສປປ ລາວ

ກະຊວງ ກະສິກຳ ແລະ ປ່າໄມ້

ກົມສົ່ງເສີມກະສິກຳ ແລະ ສະຫະກອນ

ໂທ: 021 732072, ແຟັກ: 021 730072

ຕິດຕໍ່: ພະແນກສົ່ງເສີມປຸງແຕ່ງ ແລະ ໂພຊະນາການ

ອີເມວໂຄງການ: lao.fvc.project@gmail.com